ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເມືອງສີສັດຕະນາກ

ເລກທີ:.353../ຈມ.ສສນ

ລົງວັນທີ:.12.ທັນວາ..2024

# ບົດລາຍງານ

ຮຽນ : ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ການສະເໜີຂໍແລກປ່ຽນຕອນດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ກັບ ບຸກຄົນເອກະຊົນ.

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນ ສະບັບເລກທີ 068/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ.
- ອີງຕາມ: ໃບສະເໜີ ຂໍແລກປ່ຽນຕອນດິນ ຫ້ອງການບ້ານຈອມແຈ້ງ ຂອງທ່ານ ບົນສັກ ແກ້ວມີສີ ສະບັບເລກທີ 081, ລົງວັນທີ 19 ທັນວາ 2018.
- ອີງຕາມ: ບົດບັນທຶກກອງປະຊຸມອົງການປົກຄອງບ້ານຈອມແຈ້ງ ເລກທີ 522/ອປບ.ຈຈ, ລົງວັນທີ 25 ກໍລະກົດ 2019.
- ອີງຕາມ: ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະເມີນມູນຄ່າທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສະບັບເລກທີ 204/ຈມ.ສສນ, ລົງວັນທີ 17 ກັນຍາ 2019.
- ອີງຕາມ: ບົດລາຍງານຂອງ ທ່ານ ເຈົ້າເມືອງສີສັດຕະນາກ ສະບັບເລກທີ 246/ຈມ.ສສນ, ລົງວັນທີ 05 ພະຈິກ 2019.
- ອີງຕາມ: ໜັງສືທາງລັດຖະການ ເລກທີ 1722/ຫອນວ, ລົງວັນທີ 21 ພະຈິກ 2019 .
- ອີງຕາມ: ບົດບັນທຶກກອງປະຊຸມການສະເໜີ ຂໍແລກປ່ຽນດິນ ແລະ ສິ່ງປຸກສ້າງ ລະຫວ່າງ ອົງການປົກຄອງບ້ານຈອມແຈ້ງ ແລະ ບຸກຄົນເອກະຊົນ ລົງວັນທີ 27 ມັງກອນ 2020.
- ອີງຕາມ: ແຈ້ງການ ສະບັບເລກທີ 038/ຫອນວ, ລົງວັນທີ 24 ກຸມພາ 2020.
- ອີງຕາມ: ຂໍ້ຕົກລົງ ເລກທີ 163/ຈມ.ສສນ, ລົງວັນທີ 04 ສິງຫາ 2020 ວ່າດ້ວຍການແລກປ່ຽນດິນ ຫ້ອງການບ້ານຈອມແຈ້ງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.
- ອີງຕາມ: ໜັງສືລາຍງານ ເລກທີ 182/ຈມ.ສສນ, ລົງວັນທີ 16 ພຶດສະພາ 2024.
- ອີງຕາມ: ໜັງສືຢັ້ງຢືນ ເລກທີ 7941/ຍທຂ.ນວ, ລົງວັນທີ 06 ສິງຫາ 2024.

ເຈົ້າເມືອງສີສັດຕະນາກ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດ ການສະເໜີຂໍແລກປ່ຽນຕອນດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ກັບ ບຸກຄົນ ເອກະຊົນ ຊາບວ່າ: ໄລຍະຜ່ານມາເມືອງສີສັດຕະນາກ ໄດ້ລາຍງານເຖິງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ຕາມບົດລາຍງານ ສະບັບເລກທີ 246/ຈມ.ສສນ, ລົງວັນທີ 05 ພະຈິກ 2019, ເຊິ່ງການລາຍງານດັ່ງກ່າວ ອົງການປົກຄອງນະຄອນຫຼວງວຽງຈັນ ໄດ້ນຳເອົາບັນຫາດັ່ງກ່າວເຂົ້າປຶກສາຫາລື ແລະ ຄົ້ນຄວ້າໃນກອງປະຊຸມ ເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບບັນດາ ພະແນກການ ແລະ ບັນດາເມືອງກ່ຽວຂ້ອງຄັ້ງທີ 76 ລົງວັນທີ 18 ກຸມພາ 2020, ກອງປະຊຸມກໍ່ໄດ້ເອກະພາບດັ່ງນີ້:

1. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສົມທົບກັບເມືອງ ກວດກາເບິ່ງວ່າ ເນື້ອທີ່ຕອນດິນທີ່ບຸກຄົນແລກປ່ຽນກັບບ້ານ ວ່າຖືກໂຄງການຕາຝັ່ງເຂື່ອນ ຫຼື ບໍ່, ຖ້າບໍ່ຖືກແມ່ນເຫັນດີໃຫ້ແລກປ່ຽນດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງຫຼັງເກົ່າ ຕາມຂະໜາດ 6,5 x 20 ແມັດ = 130 ຕາແມັດ ເພື່ອແລກປ່ຽນກັບຕອນດິນ

ຕໍ່ໜ້າ/.

ຂອງຜູ້ສະເໜີມີ ຂະໜາດ 11 X 12 ແມັດ = 133 ຕາແມັດ ພ້ອມທັງປຸກຫ້ອງການບ້ານຫຼັງໃໝ່ ( 2 ຊັ້ນ ) ແລະ ປະກອບເຄື່ອງຮັບໃຊ້ຫ້ອງການບ້ານໃຫ້ຄົບຊຸດ ລວມມູນຄ່າ = 449.000.000 ກີບ.

2. ມອບໃຫ້ເມືອງສີສັດຕະນາກ ຮ່າງຂໍ້ຕົກລົງ ວ່າດ້ວຍການແລກປ່ຽນຕອນດິນ ແລະ ການປຸກສ້າງຫ້ອງການບ້ານ ໂດຍໃຫ້ໄປຕາມລະບຽບການ ແລະ ສາມາດກວດກາໄດ້.

ຕໍ່ກັບຜົນຂອງກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ຄັ້ງ 76 ລົງວັນທີ 18 ກຸມພາ 2020 ທາງເມືອງກໍ່ໄດ້ອອກຂໍ້ຕົກລົງ ສະບັບເລກທີ 163/ຈມ.ສສນ, ລົງວັນທີ 04 ສິງຫາ 2020, ໄດ້ເຮັດລາຍງານການກວດກາຄືນຕອນດິນທີ່ບຸກຄົນ ສະເໜີຂໍແລກປ່ຽນກັບຕອນດິນ ຫ້ອງການບ້ານຈອມແຈ້ງ ວ່າຖືກໂຄງການຕາຝັ່ງເຂື່ອນ ຫຼື ບໍ່ ສະບັບເລກທີ 182/ຈມ.ສສນ, ລົງວັນທີ 16 ພຶດສະພາ 2024 ແລະ ໜັງສືຢັ້ງຢືນ ສະບັບເລກທີ 794/ຍທຂ.ນວ, ລົງວັນທີ 06 ສິງຫາ 2024.

ກ່ຽວກັບມູນຄ່າປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ຫຼັງເກົ່າ ກັບທີ່ດິນ ແລະ ສິ່ງປຸກສ້າງຫຼັງໃໝ່ມີດັ່ງນີ້:

1) ການປະເມີນລາຄາມູນຄ່າທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ຫຼັກເກົ່າ.

- ລາຄາປະເມີນມູນຄ່າທີ່ດິນຕາມການ ຊື້-ຂາຍ ຕົວຈິງໃນໄລຍະນັ້ນ: 1 ຕາແມັດ = 1.500.000 ກີບ
- ເນື້ອທີ່ດິນ: ກວ້າງ 6,5 ແມັດ x ຍາວ 10 ແມັດ = 130 ຕາແມັດ x 1.500.000 ກີບ = 195.000.000 ກີບ.
- ສິ່ງປຸກສ້າງ: ກວ້າງ 6 ແມັດ x ຍາວ 10 ແມັດ, ມູນຄ່າ = 25.000.000 ກີບ.
- ລວມທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານ ຫຼັງເກົ່າ, ມູນຄ່າ = 220.000.000 ກີບ.

2) ການປະເມີນລາຄາມູນຄ່າທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ຫຼັງໃໝ່:

- ລາຄາປະເມີນມູນຄ່າທີ່ດິນຕາມການ ຊື້-ຂາຍ ຕົວຈິງໃນໄລຍະນັ້ນ: 1 ຕາແມັດ = 1.500.000 ກີບ
- ເນື້ອທີ່ດິນ: ກວ້າງ 11 ແມັດ x ຍາວ 12 ແມັດ = 133 ຕາແມັດ x 1.500.000 ກີບ = 199.000.000 ກີບ.
- ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງ ຫຼັງໃໝ່: ( ຕາມເຕີວີ ຄິດໄລ່ ) = 250.000.000 ກີບ.
- ລວມທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານ ຫຼັງໃໝ່ = 449.000.000 ກີບ.

ເຫັນວ່າ: 449.000.000 ກີບ - 220.000.000 ກີບ = 229.000.000 ກີບ (ເປັນສ່ວນເກີນທີ່ບ້ານໄດ້ຮັບ)

+ ທັດສະນະຂອງເມືອງ:

1. ເຫັນດີສົມຄວນໃຫ້ມີການແລກປ່ຽນ ເນື່ອງຈາກວ່າ ຫ້ອງການບ້ານ ຫຼັງໃໝ່ກໍ່ປຸກສ້າງສໍາເລັດແລ້ວ ແຕ່ປີ 2020 ແລະ ນໍາໃຊ້ບໍລິການປະຊາຊົນຈົນເຖິງປະຈຸບັນ.
2. ເຫັນວ່າພາກລັດ ແລະ ສັງຄົມກໍ່ໄດ້ຮັບຜົນປະໂຫຍດ, ທັງເປັນການພັດທະນາອົງການປົກຄອງຂັ້ນທ້ອງຖິ່ນ ໃນການບໍລິຫານຮັບໃຊ້ປະຊາຊົນໃຫ້ສະດວກຂຶ້ນກວ່າເກົ່າ.

ສະນັ້ນ ເມືອງສີສັດຕະນາກ ຈຶ່ງຂໍຮຽນລາຍງານມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການອານຸມັດ ແລກປ່ຽນທີ່ດິນຫ້ອງການບ້ານຈອມແຈ້ງ ກັບ ດິນບຸກຄົນ ຢູ່ບ້ານຈອມແຈ້ງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ເພື່ອໃຫ້ຖືກຕ້ອງຕາມລະບຽບການ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ເຈົ້າເມືອງສີສັດຕະນາກ

ເດດສິງຄານ ທຳມະວົງ